# ຄຳແນະນຳເພື່ອເຮັດໃຫ້ມີຄຸນສົມບັດຄົບຖ້ວນໄດ້ຮັບເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລີຟໍເນຍ

**ທ່ານຫວ່າງງານ ຫຼື ກຳລັງຊອກຫາຊ່ອງທາງຍົກລະດັບທັກສະຂອງຕົນເອງ ຫຼື ຊອກຫາອາຊີບໃໝ່ບໍ?**
**ເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລີຟໍເນຍອາດຈະເໝາະສົມສຳລັບທ່ານ!**




## ເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລີຟໍເນຍແມ່ນຫຍັງ?

California Training Benefits (CTB, ເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລີຟໍເນຍ) ເຮັດໃຫ້ທ່ານສືບຕໍ່ການສຶກສາຂອງຕົນເອງ, ຍົກລະດັບທັກສະຄວາມຊຳນານ ຫຼື ຮຽນຮູ້ເລື່ອງການຄ້າໃໝ່ໄດ້ໂດຍການເຂົ້າຮຽນໃນໂຮງຮຽນຂອງ Employment Development Department (EDD, ກະຊວງພັດທະນາການຈ້າງງານ) ທີ່ໄດ້ຮັບອະນຸມັດ ຫຼື ໂຄງການຝຶກອົບຮົມໃນຂະນະທີ່ທ່ານໄດ້ຮັບ Unemployment Insurance (UI, ປະກັນໄພຫວ່າງງານຢູ່).

## ເຫດຜົນທີ່ເຂົ້າຮ່ວມ

ຜູ້ທີ່ມີສິດເຂົ້າຮ່ວມ CTB ສາມາດ:

- ຍົກລະດັບຄວາມຮູ້ ແລະ ທັກສະປັດຈຸບັນໃຫ້ສູງຂຶ້ນ.
- ພັດທະນາທັກສະໃໝ່ສຳລັບເສັ້ນທາງອາຊີບທີ່ໜ້າຕື່ນເຕັ້ນ.
- ໄດ້ຮັບເງິນຊ່ວຍເຫຼືອ UI ເພີ່ມຕື່ມອີກຫຼາຍອາທິດ ຖ້າໄດ້ຮັບອະນຸມັດໃຫ້ມີການຕໍ່ເວລາການຝຶກອົບຮົມ.

ຖ້າໄດ້ຮັບອະນຸມັດໃຫ້ໄດ້ຮັບ CTB, ທ່ານຈະໄດ້ຮັບການຍົກເວັ້ນຈາກເງື່ອນໄຂກຳນົດການມີສິດໄດ້ຮັບ UI ປະຈຳອາທິດທີ່ຈະຕ້ອງໄດ້ ພ້ອມເຮັດວຽກ, ຕັ້ງໃຈຊອກວຽກເຮັດ ແລະ ຍອມຮັບວຽກເຮັດ, ໃນຂະນະທີ່ທ່ານເຂົ້າຮຽນໃນໂຮງຮຽນ ຫຼື ໂຄງການຝຶກອົບຮົມທີ່ EDD ອະນຸມັດ.

## ສີ່ຂັ້ນຕອນເພື່ອໃຫ້ມີສິດໄດ້ຮັບ CTB

ເພື່ອເຂົ້າຮ່ວມໃນ CTB, ທ່ານຕ້ອງມີຂໍ້ຮຽກຮ້ອງ UI ປັດຈຸບັນ ແລະ ນຳໃຊ້ໄດ້ ແລະ ບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບ UI ອື່ນ.

### *ຂັ້ນຕອນທີ 1 - ແຈ້ງລາຍງານວ່າທ່ານມີຄວາມສົນໃຈໃນ CTB*

ຕິດຕໍ່ຫາ EDD ໂດຍທາງອອນລາຍ, ທາງໂທລະສັບ ຫຼື ໄປດ້ວຍຕົນເອງຢູ່ທີ່ America's Job Center of California℠ (AJCC, ສູນວຽກຂອງອາເມຣິກາແຫ່ງລັດຄາລີຟໍເນຍ) ໃຫ້ໄວເທົ່າທີ່ເປັນໄປໄດ້ ເພື່ອແຈ້ງລາຍງານຄວາມສົນໃຈຂອງທ່ານທີ່ຢາກເຂົ້າຮ່ວມໃນ CTB.

**ສິ່ງສຳຄັນ:** ເພື່ອໃຫ້ໄດ້ຮັບພິຈາລະນາການຕໍ່ເວລາການຝຶກອົບຮົມ, ທ່ານຕ້ອງຕິດຕໍ່ຫາທາງ EDD ກ່ອນທີ່ທ່ານຈະໄດ້ຮັບການຈ່າຍເງິນຊ່ວຍເຫຼືອ UI ອາທິດທີ 16 ຂອງທ່ານ.

### *ຂັ້ນຕອນທີ 2 - ຊອກໂຄງການທີ່ມີເງື່ອນໄຂມີສິດໄດ້ຮັບ*

ທ່ານສາມາດຊອກສຳຫຼວດເບິ່ງຫຼາຍໂຮງຮຽນ ແລະ ໂຄງການຝຶກອົບຮົມຕ່າງໆທີ່ບັນລຸໄດ້ຕາມເປົ້າໝາຍອາຊີບຂອງທ່ານ ແລະ ເຮັດໃຫ້ທ່ານມີເງື່ອນໄຂຄົບຖ້ວນໄດ້ຮັບ CTB. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບໂຄງການຝຶກອົບຮົມທີ່ມີເງື່ອນໄຂຄົບຖ້ວນທີ່ເໝາະສົມສຳລັບທ່ານ, ໃຫ້ເບິ່ງພາກ **ປະເພດຂອງໂຄງການຝຶກອົບຮົມທີ່ມີເງື່ອນໄຂຄົບຖ້ວນ**.

ຖ້າທ່ານເຂົ້າຮ່ວມໂຄງການທີ່ລັດຖະບານຈັດສະເພາະ ຫຼື ການຝຶກອົບຮົມທີ່ໃຫ້ການສະໜັບສະໜູນໂດຍນາຍຈ້າງ, ສະມາຄົມການຄ້າ ຫຼື ສະຫະພາບ, ທ່ານອາດຈະໄດ້ຮັບອະນຸມັດກ່ອນທີ່ຈະໄດ້ຮັບ CTB. ເຖິງແນວໃດກໍ່ຕາມ, EDD ຈະຕ້ອງໄດ້ກວດສອບການລົງທະບຽນ ແລະ ການເຂົ້າຮ່ວມໃນການຝຶກອົບຮົມຂອງທ່ານ. ຖ້າທ່ານຈັດເພື່ອການຝຶກອົບຮົມດ້ວຍຕົວເອງ, ທ່ານຕ້ອງບັນລຸໄດ້ຕາມ**ທຸກ**ມາດຖານ ເພື່ອໃຫ້ມີເງື່ອນໄຂໄດ້ຮັບ CTB.

### *ຂັ້ນຕອນທີ 3 - ແຈ້ງລາຍງານການເລີ່ມຕົ້ນເຂົ້າຮ່ວມຮຽນ*

ຖ້າປັດຈຸບັນທ່ານກຳລັງເຂົ້າໂຮງຮຽນ ຫຼື ໂຄງການຝຶກອົບຮົມຢູ່, ໃຫ້ແຈ້ງລາຍງານການເຂົ້າຮ່ວມຮຽນຂອງທ່ານແກ່ EDD ເມື່ອທ່ານຍື່ນ ຫຼື ເປີດຂໍ້ຮຽກຮ້ອງ UI ຄືນໃໝ່. ອີກຢ່າງໜຶ່ງ, ໃຫ້ແຈ້ງບອກ EDD ໃນອາທິດທີ່ທ່ານ**ເລີ່ມຕົ້ນ**ເຂົ້າໂຮງຮຽນ ຫຼື ການຝຶກອົບຮົມ ເມື່ອທ່ານຢັ້ງຢືນເງິນຊ່ວຍເຫຼືອ. ທ່ານອາດຈະຕິດຕໍ່ຫາ EDD ໂດຍທາງອອນລາຍ, ທາງໂທລະສັບ ຫຼື ໄປດ້ວຍຕົນເອງຢູ່ທີ່ AJCC ໃນທ້ອງຖິ່ນຂອງທ່ານໄດ້ນຳອີກ. ທ່ານພຽງແຕ່ຈຳເປັນຕ້ອງແຈ້ງລາຍງານການເລີ່ມຕົ້ນການເຂົ້າຮ່ວມຮຽນຂອງທ່ານ ໃນອາທິດທີ່ທ່ານເລີ່ມຕົ້ນເຂົ້າຮຽນ ຫຼື ຝຶກອົບຮົມນັ້ນ.

**** ສຳລັບການຝຶກອົບຮົມ Workforce Innovation and Opportunity Act (WIOA, ກົດໝາຍການເສີມສ້າງແຮງງານ ແລະ ໂອກາດ) ຫຼື Trade Adjustment Assistance (TAA, ການຊ່ວຍເຫຼືອການປັບປຸງການຄ້າ), ໃຫ້ຕິດຕໍ່ຫາຕົວແທນຂອງທ່ານຢູ່ທີ່ AJCC ເພື່ອແຈ້ງລາຍງານການເຂົ້າຮ່ວມຮຽນຂອງທ່ານ.***

### *ຂັ້ນຕອນທີ 4 - ໃຫ້ຂໍ້ມູນການຝຶກອົບຮົມ*

EDD ຈະຕ້ອງການຂໍ້ມູນກ່ຽວກັບໂຮງຮຽນ ຫຼື ໂຄງການຝຶກອົບຮົມຂອງທ່ານ ເພື່ອກຳນົດການມີສິດໄດ້ຮັບ CTB ຂອງທ່ານ. ທ່ານອາດຈະໄດ້ຮັບແບບສອບຖາມໂດຍທາງໄປສະນີ ຫຼື ໄດ້ຮັບການນັດໝາຍສຳພາດທາງໂທລະສັບກັບຕົວແທນຂອງ EDD.

ຈົ່ງກຽມພ້ອມບອກວັນທີ ແລະ ຕາຕະລາງເວລາການເຂົ້າຮ່ວມຂອງທ່ານ, ລວມທັງໄລຍະພັກ ຫຼື ວັນພັກ, ເປົ້າໝາຍການເຂົ້າຮ່ວມຝຶກອົບຮົມ ຫຼື ອາຊີບຂອງທ່ານ ແລະ ຂໍ້ມູນກ່ຽວກັບໂຮງຮຽນ ຫຼື ສະຖານຝຶກອົບຮົມ. ການກວດສອບການເຂົ້າຮ່ວມຮຽນຂອງທ່ານໂດຍຕົວແທນທີ່ໄດ້ຮັບອະນຸຍາດຢູ່ໃນໂຮງຮຽນ ຫຼື ບ່ອນຝຶກອົບຮົມຂອງທ່ານອາດຈະມີຄວາມຈຳເປັນຕ້ອງໄດ້ເຮັດໂດຍການຕອບແບບສອບຖາມເສີມຕື່ມອີກ.

**ສິ່ງສຳຄັນ:** ຕອບຄຳຖາມແບບຟອມໃຫ້ຄົບຖ້ວນ ແລະ ສົ່ງຄືນທັນທີທີ່ເປັນໄປໄດ້ ແລະ ໃຫ້ພ້ອມຕໍ່ການສຳພາດທາງໂທລະສັບຕາມກົດນັດເວລາທີ່ນັດໝາຍຂອງທ່ານ ເພື່ອໃຫ້ EDD ສາມາດກຳນົດການມີສິດໄດ້ຮັບ CTB ຂອງທ່ານ.

### *ຫຼັງຈາກທ່ານສະໝັກ*

EDD ຈະສົ່ງ Notice of Determination, DE 1080, (ແຈ້ງການເລື່ອງການກຳນົດ) ພ້ອມດ້ວຍຜົນຂອງການມີສິດໄດ້ຮັບໃຫ້ແກ່ທ່ານ. ຖ້າທ່ານມີສິດໄດ້ຮັບ CTB, ແຈ້ງການຈະອະທິບາຍເຖິງສິດ ແລະ ຄວາມຮັບຜິດຊອບຂອງທ່ານ.

ຖ້າທ່ານບໍ່ມີສິດໄດ້ຮັບ CTB, ທ່ານອາດຈະສືບຕໍ່ໄດ້ຮັບເງິນຊ່ວຍເຫຼືອ UI ໃນຂະນະທີ່ທ່ານເຂົ້າໂຮງຮຽນ ຫຼື ການຝຶກອົບຮົມ. ເຖິງແນວໃດກໍ່ຕາມ, EDD ຕ້ອງກຳນົດວ່າ ທ່ານພ້ອມເຮັດວຽກ, ຕັ້ງໜ້າຊອກວຽກເຮັດ, ຕັ້ງໃຈຈະຮັບວຽກເຮັດ ແລະ ບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບອື່ນທັງໝົດບໍ່.

**ສິ່ງສຳຄັນ:** ທ່ານຕ້ອງສືບຕໍ່ຢັ້ງຢືນເງິນຊ່ວຍເຫຼືອ UI ໃນຂະນະທີ່ທ່ານເຂົ້າໂຮງຮຽນ ຫຼື ການຝຶກອົບຮົມ. ແຈ້ງໃຫ້ທາງ EDD ຮູ້ ຖ້າມີການປ່ຽນແປງໃດໜຶ່ງກັບວັນທີການເຂົ້າຮ່ວມຮຽນ ຫຼື ໂຄງການຝຶກອົບຮົມຂອງທ່ານ.

### *ການຕໍ່ເວລາການຝຶກອົບຮົມ*

ຖ້າທ່ານມີສິດໄດ້ຮັບ CTB, ເປັນໄປໄດ້ທີ່ທ່ານອາດຈະຍັງມີສິດໄດ້ຮັບການຕໍ່ເວລາການຝຶກອົບຮົມ ເພື່ອສຳເລັດການເຂົ້າໂຮງຮຽນ ຫຼື ໂຄງການຝຶກອົບຮົມໄລຍະຍາວ. ທ່ານອາດຈະໄດ້ຮັບຈຳນວນເງິນຊ່ວຍເຫຼືອປະຈຳອາທິດຂອງຂໍ້ຮຽກຮ້ອງ UI ຂອງທ່ານໄດ້ຈຳນວນສູງສຸດເຖິງ 52 ຄັ້ງ, ລວມທັງເງິນຊ່ວຍເຫຼືອ UI ປົກກະຕິ ຫຼື ໄດ້ຕໍ່ໃຫ້ໃດໜຶ່ງທີ່ຕ້ອງຈ່າຍໃຫ້ທ່ານ. ການຕໍ່ເວລາການຝຶກອົບຮົມແມ່ນໄດ້ຮັບອະນຸຍາດພຽງແຕ່ຄັ້ງດຽວເທົ່ານັ້ນສຳລັບແຕ່ລະໂຄງການຝຶກອົບຮົມທີ່ CTB ອະນຸມັດ.

### *ປະເພດຂອງໂຄງການຝຶກອົບຮົມທີ່ມີຄຸນສົມບັດຄົບຖ້ວນ*

ມີສອງວິທີທີ່ຈະໃຫ້ມີຄຸນສົມບັດຄົບຖ້ວນໄດ້ຮັບ CTB. ທ່ານສາມາດເຂົ້າຮ່ວມໜຶ່ງໃນໂຄງການຝຶກອົບຮົມທີ່ໄດ້ຮັບອະນຸມັດກ່ອນທີ່ມີລາຍຊື່ຢູ່ລຸ່ມນີ້ ຫຼື ຈັດການຝຶກອົບຮົມຂອງທ່ານເອງ ທີ່ບັນລຸໄດ້ຕາມມາດຖານຖືກຕ້ອງຕາມກົດໝາຍ.

### *ໂຄງການຝຶກອົບຮົມທີ່ໄດ້ອະນຸມັດກ່ອນ*

#### ບັນຊີລາຍຊື່ຜູ້ໃຫ້ການຝຶກອົບຮົມທີ່ມີສິດ (ETPL)

California ETPL ແມ່ນບັນຊີລາຍຊື່ຂອງຜູ້ໃຫ້ການຝຶກອົບຮົມທີ່ລັດອະນຸມັດ ເຊິ່ງເປັນຜູ້ທີ່ບັນລຸໄດ້ຕາມມາດຖານ Federal Workforce Innovation and Opportunity Act (WIOA, ກົດໝາຍວ່າດ້ວຍນະວັດຕະກຳ ແລະ ໂອກາດກຳລັງແຮງງານຂອງລັດຖະບານກາງ). ETPL ປະກອບດ້ວຍບັນດາໂຄງການທາງການສຶກສາລະດັບກ້ວາງ ລວມທັງມີຫ້ອງສິດສອນ ແລະ ໂຮງຮຽນ ຫຼື ການຝຶກອົບຮົມທາງອອນລາຍ.

ເພື່ອຊອກຫາຜູ້ໃຫ້ບໍລິການ ETPL, ເຂົ້າເບິ່ງ caljobs.ca.gov. ເລືອກລິ້ງ **More Career Services** (ການບໍລິການອາຊີບເພີ່ມຕື່ມ) ເພື່ອເຂົ້າເຖິງລະບົບ CalJOBS^SM^. ຊອກຫາແທັບ **Education Services** (ການບໍລິການການສຶກສາ) ແລະ ເລືອກລິ້ງ **Training Providers and Schools** (ຜູ້ໃຫ້ບໍລິການຝຶກອົບຮົມ ແລະ ໂຮງຮຽນ).

#### Workforce Innovation and Opportunity Act (WIOA, ກົດໝາຍການເສີມສ້າງແຮງງານ ແລະ ໂອກາດ)

WIOA ຂອງລັດຖະບານກາງໃຫ້ການບໍລິການ ຫຼື ການສະໜອງທຶນ ຫຼື ທັງສອງຢ່າງໃຫ້ແກ່ຜູ້ຊອກວຽກເຮັດ, ການສຶກສາ, ການຝຶກອົບຮົມ ແລະ ການບໍລິການສະໜັບສະໜູນອື່ນໆ ເພື່ອໃຫ້ໄດ້ວຽກ.

#### Trade Adjustment Assistance (TAA, ການຊ່ວຍເຫຼືອການປັບປ່ຽນການຄ້າ)

TAA ຂອງລັດຖະບານກາງຊ່ວຍເຫຼືອຜູ້ເຮັດວຽກ ຜູ້ທີ່ຕົກງານ ຫຼື ອາດຈະຕົກງານ ເນື່ອງຈາກຜົນຂອງການຄ້າຕ່າງປະເທດ ຫຼື ມີການປ່ຽນແປງຢູ່ໃນການຜະລິດຕໍ່ປະເທດອື່ນ.

#### Apprenticeship Training (ການຝຶກອົບຮົມການຝຶກງານ)

ໂຄງການຝຶກງານອາດຈະປະກອບດ້ວຍການຝຶກອົບຮົມປະຕິບັດຕົວຈິງທີ່ໄດ້ຮັບຄ່າແຮງງານ ແລະ ໂອກາດອື່ນໆ ເພື່ອໃຫ້ໄດ້ທັກສະຄວາມຊຳນານຢູ່ໃນວຽກທີ່ມີຄວາມຕ້ອງການສູງ ແລະ ໄດ້ຮັບໜ່ວຍກິດ (credits) ທາງການສຶກສາໄປພ້ອມໃນຂະນະທີ່ທ່ານເຮັດວຽກ.

ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບໂຄງການຝຶກງານ, ໃຫ້ເຂົ້າເບິ່ງ California Department of Industrial Relations (ກົມປະຊາສຳພັນອຸດສາຫະກຳລັດຄາລີຟໍເນຍ), Division of Apprenticeship Standards (ພະແນກມາດຕະຖານການຝຶກງານ) ຢູ່ທີ່ dir.ca.gov/DAS.

#### Employer Training Panel (ETP, ຄະນະຝຶກອົບຮົມນາຍຈ້າງ)

California ETP ໃຫ້ທຶນແກ່ນາຍຈ້າງສຳລັບການຝຶກອົບຮົມກຳນົດເອງ ເພື່ອຊ່ວຍຍົກລະດັບທັກສະພະນັກງານຂອງພວກເຂົາ.

#### California Work Opportunity and Responsibility to Kids (CalWORKs, ໂອກາດການເຮັດວຽກ ແລະ ຄວາມຮັບຜິດຊອບຕໍ່ລູກຫຼານລັດຄາລີຟໍເນຍ)

ໂຄງການ CalWORKs ໃຫ້ໂອກາດການເຮັດວຽກ ແລະ ການຝຶກອົບຮົມແກ່ບຸກຄົນທີ່ມີສິດໄດ້ຮັບທີ່ລົງທະບຽນຢູ່ໃນ CalWORKs.

#### ການຝຶກອົບຮົມທີ່ສະຫະພາບ, ສະມາຄົມການຄ້າ ຫຼື ນາຍຈ້າງໃຫ້ການສະໜັບສະໜູນ

ຜູ້ເຂົ້າຮ່ວມທີ່ໄດ້ຮັບການສະໜັບສະໜູນຂອງສະມາຊິກສະຫະພາບລະດັບການເດີນທາງ ຫຼື ສະມາຄົມການຄ້າ ແລະ ນາຍຈ້າງ ຫຼື ສະມາຄົມນາຍຈ້າງອາດຈະໄດ້ຮັບອະນຸມັດກ່ອນສຳລັບການເຂົ້າຮ່ວມ CTB. ການຝຶກອົບຮົມຕ້ອງກ່ຽວຂ້ອງທາງດ້ານອຸດສາຫະກຳ ແລະ ຈຳເປັນເພື່ອຮັກສາວຽກຂອງທ່ານໄວ້ ຫຼື ເພື່ອໃຫ້ມີການແຂ່ງຂັນເພີ່ມຂຶ້ນຢູ່ໃນການໃຫ້ໄດ້ວຽກເຮັດ.

#### Teaching Credential Program (ໂຄງການຢັ້ງຢືນການສອນ)

ຄູສອນໂຮງຮຽນລັດສະເພາະອາດຈະໄດ້ຮັບອະນຸມັດກ່ອນດ້ວຍການກວດສອບຂອງ EDD ສຳລັບໂຄງການຢັ້ງຢືນຄູສອນວິຊາດຽວ K-12 ໃນວິຊາຄະນິດສາດ, ວິທະຍາສາດ ຫຼື ການສຶກສາພິເສດ. ໂຄງການຕ້ອງໄດ້ຮັບການອະນຸມັດໂດຍຄະນະກຳມາທິການວ່າດ້ວຍການຢັ້ງຢືນຄູສອນ.

### *ການຝຶກອົບຮົມຈັດດ້ວຍຕົວເອງ*

ຖ້າທ່ານຈັດ ແລະ ໃຫ້ທຶນການຝຶກອົບຮົມຂອງທ່ານເອງ, ທ່ານອາດຈະມີຄຸນສົມບັດຄົບຖ້ວນໄດ້ຮັບ CTB ຕາບເທົ່າທີ່ທ່ານບັນລຸໄດ້ຕາມມາດຖານຖືກຕ້ອງຕາມກົດໝາຍ. ໃນເກືອບທຸກກໍລະນີ, ທ່ານຕ້ອງຫວ່າງງານເປັນເວລາຢ່າງໜ້ອຍສີ່ອາທິດ ເນື່ອງຈາກການຂາດຄວາມຕ້ອງການສຳລັບທັກສະປັດຈຸບັນຂອງທ່ານຢູ່ໃນຕະຫຼາດແຮງງານທ້ອງຖິ່ນ.

ຕ້ອງບັນລຸໄດ້ຕາມມາດຖານທັງໝົດຕໍ່ໄປນີ້ ຖ້າທ່ານຈັດ ແລະ ໃຫ້ທຶນການຝຶກອົບຮົມຂອງທ່ານເອງ. ໂຮງຮຽນ ຫຼື ການຝຶກອົບຮົມຕ້ອງ:

- ກ່ຽວຂ້ອງກັບອາຊີບ ຫຼື ທັກສະທີ່ມີຄວາມຕ້ອງການຢູ່ໃນຕະຫຼາດແຮງງານລັດຄາລີຟໍເນຍ ບ່ອນທີ່ທ່ານຕັ້ງໃຈຈະຊອກວຽກເຮັດ.
- ໄດ້ຮັບການຮັບຮອງໂດຍກະຊວງສຶກສາຂອງສະຫະລັດ ຫຼື ສຳນັກງານການສຶກສາຫຼັງມັດທະຍົມພາກເອກະຊົນຂອງລັດຄາລີຟໍເນຍ.
- ສຳເລັດສົມບູນພາຍໃນໄລຍະເວລາທີ່ເໝາະສົມ, ເຊິ່ງໂດຍທົ່ວໄປແມ່ນພາຍໃນ 2 ປີ.
- ເຕັມເວລາ, ເຊິ່ງໂດຍຫຼັກແລ້ວຖືກພິຈາລະນາວ່າຕ້ອງໄດ້ຢ່າງໜ້ອຍ 20 ຊົ່ວໂມງຕໍ່ອາທິດ ຫຼື 12 ພາກຮຽນ ຫຼື ຫົວໜ່ວຍເປັນງວດ.
- ຫຼາຍກວ່າ 3 ປີຫຼັງຈາກວັນທີເລີ່ມຕົ້ນການເຂົ້າຮ່ວມ CTB ຜ່ານມາໃດໜຶ່ງ.

ທ່ານຕ້ອງສາມາດຈົບໂຄງການຝຶກອົບຮົມຢ່າງສຳເລັດຜົນ, ເຖິງແມ່ນວ່າ ຈຳນວນເງິນຊ່ວຍເຫຼືອ UI ສູງສຸດບໍ່ພຽງພໍທີ່ຈະຈ່າຍໝົດທັງໄລຍະການຝຶກອົບຮົມກໍ່ຕາມ.

### *ຄ່າໃຊ້ຈ່າຍການຝຶກອົບຮົມ*

EDD ບໍ່ຮັບຜິດຊອບຄ່າໃຊ້ຈ່າຍກ່ຽວຂ້ອງກັບການຝຶກອົບຮົມໃດໜຶ່ງເຊັ່ນ: ຄ່າຮຽນ, ຄ່າທຳນຽມຕ່າງໆ, ຄ່າປຶ້ມ, ຄ່າອຸປະກອນການຮຽນ ຫຼື ຄ່າເດີນທາງຕ່າງໆ. ເຖິງແນວໃດກໍ່ຕາມ, ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນອື່ນຂອງລັດ, ລັດຖະບານກາງ ຫຼື ພາກເອກະຊົນ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງ studentaid.gov.

### *ການວາງແຜນອາຊີບ ແລະ ຂໍ້ມູນຕ່າງໆ*

EDD ໃຫ້ຂໍ້ມູນທາງອອນລາຍ ແລະ ດ້ວຍຕົວເອງ ເພື່ອຊ່ວຍໃຫ້ທ່ານຊອກວຽກເຮັດ ແລະ ພັດທະນາທັກສະຂອງທ່ານ ເພື່ອສືບຕໍ່ເປົ້າໝາຍອາຊີບຂອງທ່ານ.

ຫໍສະໝຸດຂໍ້ມູນຂ່າວສານຕະຫຼາດແຮງງານຂອງ EDD ໃຫ້ຂໍ້ມູນຕາມເວັບ ເພື່ອຊອກຫາວຽກທີ່ກຳລັງເຕີບໃຫຍ່ຂະຫຍາຍໂຕໄດ້ຢ່າງໄວ, ຊອກສຳຫຼວດເບິ່ງຂໍ້ມູນຄ່າແຮງງານ ແລະ ເຂົ້າໃຈຕະຫຼາດແຮງງານໃນທ້ອງຖິ່ນຂອງທ່ານ. ເພື່ອເຂົ້າເຖິງຫໍສະໝຸດຂໍ້ມູນ, ເຂົ້າເບິ່ງ labormarketinfo.edd.ca.gov.

ຫ້ອງການ America's Job Center of California[SM] (AJCC, ສູນວຽກຂອງອາເມຣິກາແຫ່ງລັດຄາລີຟໍເນຍ) ໃຫ້ການຊ່ວຍເຫຼືອເປັນບຸກຄົນແກ່ຜູ້ທີ່ຊອກວຽກເຮັດ. ທ່ານສາມາດຮັບການຊ່ວຍເຫຼືອ ເພື່ອປະເມີນທັກສະຂອງທ່ານ, ຊອກເຂົ້າຝຶກອົບຮົມ, ຊອກໂອກາດວຽກເຮັດ, ກະກຽມໃບຊີວະປະຫວັດ ແລະ ອື່ນໆໄດ້. ເພື່ອຊອກຫາ AJCC ຢູ່ໃກ້ທ່ານທີ່ສຸດ, ເຂົ້າເບິ່ງ edd.ca.gov/office_locator.

### *ສຳລັບຂໍ້ມູນເພີ່ມເຕີມ*

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ CTB, ເງິນຊ່ວຍເຫຼືອການຕໍ່ເວລາການຝຶກອົບຮົມ ແລະ ຂໍ້ມູນໂຮງຮຽນ ຫຼື ການຝຶກອົບຮົມອື່ນໆ, ເຂົ້າເບິ່ງ edd.ca.gov/CTB.

EDD ນຳໃຊ້ກົດໝາຍ ແລະ ນະໂຍບາຍແນວໃດແມ່ນມີໃຫ້ທາງອອນລາຍຢູ່ໃນ UI Benefit Determination Guide (ປຶ້ມຄູ່ມືກຳນົດເງິນຊ່ວຍເຫຼືອປະກັນໄພຫວ່າງງານ), ສະບັບອື່ນໆ, ຢູ່ໃນໜ້າທີ 85, ທີ່ edd.ca.gov/UIBDG.

edd.ca.gov

EDD ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ການຊ່ວຍເຫຼື ແລະ ການບໍລິການເສີມແມ່ນມີໃຫ້ຕາມການຮ້ອງຂໍ ເພື່ອໃຫ້ກັບຄົນພິການ.
ການຂໍບໍລິການ, ຄວາມຊ່ວຍເຫຼືອ ແລະ/ຫຼືຮູບແບບທາງເລືອກອື່ນຈຳເປັນຕ້ອງໄດ້ໂທຫາເບີ 1-866-490-8879 (ສຽງ).
ຜູ້ໃຊ້ TTY, ກະລຸນາໂທການບໍລິການໂທທາງໄກລັດຄາລີຟໍເນຍທີ່ເບີ 711.